**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ: 167 /ສວສ

ນະຄອນຫຼວງວຽງຈັນ, ວັນທີ: 21 ພະຈິກ 2024

# ແຈ້ງການ

ເຖິງ: ທັນຕະແພດ ທີ່ສະໝັກສອບເສັງລະດັບຊາດ ຄັ້ງທີ 5 ຮຸ່ນທີ 28.

ເລື່ອງ: ການເຜີຍແຜ່ຂັ້ນຕອນການຈັດຕັ້ງປະຕິບັດການສອບເສັງລະດັບຊາດ.

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຜູ້ປະກອບວິຊາຊີບປິ່ນປົວ ຂອງ ສປປ ລາວ ແຕ່ປີ 2016-2025 ເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດຕັ້ງການສອບເສັງລະດັບຊາດສໍາລັບວິຊາຊີບທັນຕະແພດ ເລກທີ 083/ສວສ, ລົງວັນທີ 3 ກັນຍາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສອບເສັງລະດັບຊາດ ສໍາລັບທັນຕະແພດ ເລກທີ 135/ສວສ, ລົງວັນທີ 16 ຕຸລາ 2024.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຈະໄດ້ເຜີຍແຜ່ຂັ້ນຕອນການຈັດຕັ້ງປະຕິບັດການສອບເສັງລະດັບຊາດ ສໍາລັບ ທ່ານທັນຕະແພດຈົບໃໝ່ ເຊິ່ງຈະຈັດຂຶ້ນໃນວັນທີ 27 ພະຈິກ 2024, ເວລາ: 8:00-12:00, ທີ່ຫ້ອງປະຊຸມ ອໍາພີ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ (ວິທະຍາເຂດເພຍວັດ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການນີ້ດ້ວຍ.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທໍາມະວົງ